ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

====000====

**ສຳນັກງານນາຍົກລັດຖະມົນຕີ**

ເລກທີ 192 /ນຍ

ນະຄອນຫລວງວຽງຈັນ, ວັນທີ 07 ກໍລະກົດ 2005

# ດຳລັດ

## ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ຈາກໂຄງການພັດທະນາ

- ອີງຕາມ ກົດໝາຍ ວ່າດ້ວຍ ລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003.
- ອີງຕາມ ການສະເຫນີຂອງລັດຖະມົນຕີ ປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າອົງການ ວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະບັບເລກທີ 1116/ອວຕສ.ສນຍ, ລົງວັນທີ 02 ມິຖຸນາ 2005

**ນາຍົກລັດຖະມົນຕີອອກດຳລັດ:**

**ໝວດທີ I**

**ບົດບັນຍັດທົ່ວໄປ**

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ເພື່ອຫຼຸດຜ່ອນ ແລະ ທົດແທນຄ່າເສຍຫາຍ ຕໍ່ຜົນກະທົບດ້ານລົບຕໍ່ສັງຄົມ ຊຶ່ງເກີດຂຶ້ນຈາກການເວນ ຫຼື ການໂອນກຳມະສິດຄຸ້ມຄອງ, ນຳໃຊ້ທີ່ດິນ ແລະ ຊັບສິນຄົງທີ່ຕິດໃຫ້ແກ່ລັດຖະບານແບບບໍ່ສະໝັກໃຈ, ລວມທັງການປ່ຽນແປງເປົ້າໝາຍການນຳໃຊ້ທີ່ດິນ, ການຈຳກັດຄວາມສາມາດຂອງຊຸມຊົນ ໃນການເຂົ້າໄປນຳໃຊ້ຊັບພະຍາກອນທຳມະຊາດ ຊຶ່ງມີຜົນກະທົບຕໍ່ການດຳລົງຊີວິດ ຫຼື ແຫຼ່ງລາຍຮັບຂອງຊຸມຊົນ, ແນໃສ່ຮັບປະກັນໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ໄດ້ຮັບການທົດແທນຄ່າເສຍຫາຍ, ການຊ່ວຍເຫຼືອ ເພື່ອປັບປຸງລາຍຮັບ ແລະ ຟື້ນຟູຊີວິດການເປັນ

ຢູ່ຂອງເຂົາເຈົ້າໃຫ້ດີຂື້ນກ່ວາເກົ່າ ຫຼື ເທົ່າເດີມ ຫຼື ຢ່າງໜ້ອຍ ບໍ່ໃຫ້ຫຼຸດລະດັບການດຳລົງຊີວິດຂອງເຂົາເຈົ້າ ກ່ອນໂຄງການຈະເກີດຂຶ້ນ.

**ມາດຕາ 2. ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ມີຂອບເຂດການນຳໃຊ້ ກັບທຸກໆໂຄງການພັດທະນາ ລວມທັງໂຄງການລັດຖະບານ ແລະ ພາກສ່ວນເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ຊຶ່ງເປັນໂຄງການທີ່ຈະມີການໂອນທີ່ດິນ ຫຼື ໂອນສິດນຳໃຊ້ທີ່ດິນຄືນ ຫຼື ສິດຄອບຄອງຊັບສິນບັດຄົງທີ່ອື່ນໆ, ການປ່ຽນເປົ້າໝາຍການນຳໃຊ້ທີ່ດິນ ແລະ ການຈຳກັດສິດນຳໃຊ້ຊັບພະຍາກອນ ຊຶ່ງສ້າງຜົນກະທົບຕໍ່ການດຳລົງຊີວິດ ຫຼື ລາຍຮັບຂອງປະຊາຊົນ.

**ມາດຕາ 3. ຄຳນິຍາມ**

1. ເຈົ້າຂອງໂຄງການ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງໃດໜຶ່ງ ທີ່ໄດ້ຮັບອະນຸຍາດ ໃຫ້ສຶກສາ, ສຳຫຼວດ, ອອກແບບ, ກໍ່ສ້າງ ແລະ ດຳເນີນໂຄງການ. ເຈົ້າຂອງໂຄງການອາດຈະເປັນພາກສ່ວນລັດຖະບານ, ເອກະຊົນ ຫຼື ການຮ່ວມທຶນ ລະຫວ່າງລັດຖະບານ ກັບ ເອກະຊົນ.

2. ການທົດແທນຄ່າເສຍຫາຍ ໝາຍເຖິງ ການທົດແທນເປັນເງິນ ຫຼື ເປັນວັດຖຸສຳລັບ ຊັບສິນບັດ ທີ່ຖືກເວນຄືນ ຫຼື ໄດ້ຮັບຜົນກະທົບຈາກໂຄງການ ດ້ວຍມູນຄ່າປ່ຽນແທນ.

3. ມູນຄ່າປ່ຽນແທນ ໝາຍເຖິງ ມູນຄ່າທີ່ຄິດເປັນເງິນ ຫຼື ວັດຖຸທີ່ຈຳເປັນຕ້ອງນຳໃຊ້ເພື່ອປ່ຽນແທນທີ່ດິນ, ເຮືອນ, ສິ່ງກໍ່ສ້າງໂຄງລ່າງພື້ນຖານ, ຊັບສິນຕ່າງໆເທິງໜ້າດິນ(ຜົນລະປູກ, ຕົ້ນໄມ້) ແລະ ຊັບສິນອື່ນໆ(ລາຍຮັບ) ທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາ.

4. ວັນເລີ່ມຕົ້ນໂຄງການ ໝາຍເຖິງ ວັນທີ່ເຈົ້າຂອງໂຄງການ ດຳເນີນການສຳຫຼວດບັນດາຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ຢູ່ໃນບໍລິເວນຂອງໂຄງການ ແລະ ເຈົ້າຂອງໂຄງການ ຈະຕ້ອງໄດ້ແຈ້ງໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການຊາບລ່ວງໜ້າ 30 ວັນ ກ່ອນການລົງທະບຽນ ເປັນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ. ປະຊາຊົນຜູ້ທີ່ບໍ່ໄດ້ຂຶ້ນທະບຽນເປັນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ຈະບໍ່ມີສິດໄດ້ຮັບການທົດແທນຄ່າເສຍຫາຍ ຫຼື ຟື້ນຟູສິດທິອື່ນໆ.

5. ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ຊຶ່ງໄດ້ຮັບຜົນກະທົບຈາກໂຄງການ ຍ້ອນມີການເວນຄືນຊັບສິນ ຫຼື ປ່ຽນແປງການນຳໃຊ້ທີ່ດິນ ກ່ອນວັນເລີ່ມຕົ້ນໂຄງການ ຊຶ່ງໃນນັ້ນ:

i) ມາດຕະຖານການດຳລົງຊີວິດ ຂອງເຂົາເຈົ້າໄດ້ຮັບຜົນກະທົບທາງລົບ;

ii) ສິດທິ, ກຳມະສິດ ຫຼື ຜົນປະໂຫຍດຕໍ່ເຮືອນຊານ, ທີ່ດິນ ໂດຍສະເພາະສະຖານທີ່ພັກອາໃສ, ດຳເນີນທຸລະກິດ, ທຳການຜະລິດກະສິກຳ, ການປູກໄມ້, ແລະ ເນື້ອທີ່ລ້ຽງສັດ, ຊັບພະຍາກອນນ້ຳ ຫຼື ຊັບສິນເຄື່ອນທີ່ ຫຼື ຊັບສິນຄົງທີ່ຕ່າງໆ

ທີ່ຢູ່ພາຍໃຕ້ການຄອບຄອງ, ທັງຫມົດ ຫຼື ສ່ວນໃດໜຶ່ງ ທີ່ໄດ້ຮັບຜົນກະທົບທາງລົບແບບຖາວອນ ຫຼື ແບບຊົ່ວຄາວ;

iii) ທຸລະກິດ, ອາຊີບ, ສະຖານທີ່ເຮັດວຽກ ຫຼື ສະຖານທີ່ພັກອາໃສ ໄດ້ຮັບຜົນກະທົບທາງລົບ ໂດຍມີການປ່ຽນແທນ ຫຼື ບໍ່ມີການປ່ຽນແທນ;

iv) ຊັບພະຍາກອນລວມຂອງຊຸມຊົນ ໄດ້ຮັບຜົນກະທົບທາງລົບ.

6. ການຟື້ນຟູຊີວິດການເປັນຢູ່ ໝາຍເຖິງ ການຊ່ວຍເຫຼືອປະຊາຊົນ ຜູ້ທີ່ໄດ້ຮັບຜົນກະທົບໜັກໜ່ວງ ຍ້ອນການສູນເສຍຊັບສິນເພື່ອທໍາການຜະລິດ, ການສ້າງລາຍຮັບ, ວຽກເຮັດງານທໍາ ຫຼື ພື້ນຖານການດໍາລົງຊີວິດ ຊຶ່ງຕ້ອງມີການທົດແທນຄ່າເສຍຫາຍໃຫ້ແກ່ ຊັບສິນທີ່ໄດ້ມີການເວນຄືນ ເພື່ອປັບປຸງມາດຕະຖານຊີວິດການເປັນຢູ່ໃຫ້ດີຂຶ້ນກ່ວາເກົ່າ ຫຼື ຢ່າງໜ້ອຍແມ່ນຟື້ນຟູຊີວິດການເປັນຢູ່ ຂອງພວກເຂົາເຈົ້າໃຫ້ເທົ່າກັບ ລະດັບກ່ອນເວລາໂຄງການເກີດຂຶ້ນ.

7. ການຍົກຍ້າຍຈັດສັນ ໝາຍເຖິງ ມາດຕະການ ທີ່ດໍາເນີນໂດຍເຈົ້າຂອງໂຄງການ ເພື່ອຫຼຸດຜ່ອນຜົນກະທົບດ້ານລົບຕໍ່ສັງຄົມ ກໍ່ຄືຕໍ່ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການສ່ວນໃດສ່ວນໜຶ່ງ ຫຼື ທັງໝົດຂອງໂຄງການ ລວມທັງການທົດແທນຄ່າເສຍຫາຍຈາກ ການສູນເສຍຊັບສິນ ແລະ ລາຍຮັບ ດ້ວຍການຟື້ນຟູສິດທິ, ການຊ່ວຍເຫຼືອ ເພື່ອຟື້ນຟູລາຍຮັບ ແລະ ການຍົກຍ້າຍຈັດສັນທີ່ຈໍາເປັນ.

8. ການປະເມີນຜົນກະທົບຕໍ່ສັງຄົມ ໝາຍເຖິງ ໂຄງປະກອບສັງລວມການວິເຄາະທາງດ້ານສັງຄົມ ແລະ ຂະບວນການມີສ່ວນຮ່ວມຂອງປະຊາຊົນ ໃນການອອກແບບ ແລະ ຈັດຕັ້ງປະຕິບັດໂຄງການ.

9. ກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ ໝາຍເຖິງ ກຸ່ມຄົນໃດໜຶ່ງ ທີ່ໄດ້ຮັບຄວາມເສຍຫາຍຫຼາຍ ທາງດ້ານຊັບສິນບັດຄົງທີ່ ແລະຊັບສິນບັດເຄື່ອນທີ່, ຊັບສິນ ແລະພື້ນຖານການຜະລິດອື່ນໆ ຫຼື ມີຄວາມສ່ຽງທີ່ຈະຕົກທຸກໄດ້ຍາກລົງ ຍ້ອນຜົນສະທ້ອນຈາກການຍົກຍ້າຍຈັດສັນ ຊຶ່ງລວມມີ:

(i). ຄອບຄົວທີ່ມີແມ່ຮ້າງ-ນາງໝ້າຍ ເປັນຫົວໜ້າຄອບຄົວ ຊຶ່ງມີຜູ້ຢູ່ໃຕ້ການດູແລ ແລະ ມີລາຍຮັບຕໍ່າ.

(ii). ຄອບຄົວທີ່ມີຄົນເສຍຈິດ ຫຼື ພິການ.

(iii). ຄອບຄົວທີ່ມີຜູ້ມີລາຍຮັບຕໍ່າກ່ວາລະດັບມາດຕະຖານ ທີ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ກໍານົດໄວ້ ຫຼື ຜູ້ບໍ່ມີທີ່ດິນທໍາການຜະລິດ.

(iv). ຄອບຄົວຜູ້ເຖົ້າ-ຜູ້ແກ່ ຊຶ່ງຂາດການຊ່ວຍເຫຼືອ ແລະ ການດູແລເບິ່ງແຍງ.

## ມາດຕາ 4. ໜ້າທີ່ຂອງເຈົ້າຂອງໂຄງການ ຕໍ່ການແກ້ໄຂຜົນກະທົບຕໍ່ສັງຄົມ

ໂຄງການພັດທະນາ ທີ່ສາມາດສ້າງຜົນກະທົບດ້ານລົບ ຕໍ່ເສດຖະກິດ ແລະ ສັງຄົມ ນັ້ນ, ເຈົ້າຂອງໂຄງການ ຕ້ອງຮັບຜິດຊອບ ຕໍ່ໜ້າທີ່ຂອງຕົນດັ່ງນີ້:

ກ. ດໍາເນີນການສໍາຫຼວດ ແລະ ການສຶກສາພາກສະໜາມທີ່ຈໍາເປັນ ໂດຍປະສານງານກັບ ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ ຊຶ່ງໃນນັ້ນ ຕ້ອງໄດ້ກໍານົດ

ຊຸມຊົນທີ່ໄດ້ຮັບຜົນກະທົບ, ກະກຽມ ບັນຊີລາຍການຜົນກະທົບ ຕາມປະເພດ ແລະລະດັບຂອງຜົນກະທົບ, ກຳນົດຄວາມສາມາດ ໃນການນຳໃຊ້ ແລະ ການຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນຄວາມເສຍຫາຍ ລວມທັງການທົດແທນຄ່າຊັບສິນທີ່ໄດ້ຮັບຜົນກະທົບດັ່ງກ່າວ. ເຈົ້າຂອງໂຄງການຕ້ອງໄດ້ສະໜອງທຶນຮອນທີ່ເໝາະສົມ ໃນການຊ່ວຍເຫຼືອ, ຊຸກຍູ້, ຍົກຍ້າຍ ແລະການນຳໃຊ້ມາດຕະການຟື້ນຟູລາຍຮັບ, ການກະກຽມແຜນການແກ້ໄຂທີ່ຈຳເປັນ, ມີປະສິດທິຜົນ ແລະທັນເວລາ ໂດຍຜ່ານການຮັບຮອງ ຈາກອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ ເພື່ອຮັບປະກັນ ການແກ້ໄຂສະພາບເສດຖະກິດ ແລະສັງຄົມຂອງພວກເຂົາເຈົ້າ.

ຂ. ພະຍາຍາມ ຫຼີກເວັ້ນການປ່ຽນແທນຊັບສິນ ຫຼື ຜົນກະທົບໂດຍກົງຕໍ່ຊັບສິນ ແລະລາຍຮັບຂອງປະຊາຊົນ, ຖ້າບໍ່ສາມາດຫຼີກເວັ້ນໄດ້ ແມ່ນຕ້ອງຫຼຸດຜ່ອນຜົນກະທົບລົງໃຫ້ໜ້ອຍທີ່ສຸດ ດ້ວຍການສຶກສາທາງເລືອກ ໃນການອອກແບບໂຄງການ ທີ່ສາມາດເປັນໄປໄດ້.

ຄ. ຮັບຜິດຊອບສະໜອງງົບປະມານ ໃຫ້ພຽງພໍ ແລະ ທັນເວລາ ສຳລັບວຽກງານການວາງແຜນ, ຈັດຕັ້ງປະຕິບັດ, ຕິດຕາມກວດກາ ແລະ ປະເມີນຜົນວຽກງານທຸກດ້ານຂອງການຍົກຍ້າຍຈັດສັນ ແລະ ການທົດແທນຄ່າເສຍຫາຍ.

ງ. ເອົາໃຈໃສ່ເປັນພິເສດ ຕໍ່ຄວາມຕ້ອງການຂອງປະຊາຊົນ ຜູ້ທີ່ທຸກຍາກທີ່ສຸດ ຫຼື ກຸ່ມຄົນທີ່ບໍ່ມີຄວາມສາມາດຊ່ວຍຕົນເອງໄດ້ ເພື່ອບໍ່ໃຫ້ເຂົາເຈົ້າທຸກຍາກລົງຕື່ມ, ເຈົ້າຂອງໂຄງການ ຕ້ອງໄດ້ໃຫ້ການຊ່ວຍເຫຼືອທີ່ເໝາະສົມ ເພື່ອປັບປຸງຖານະທາງດ້ານສັງຄົມ ແລະເສດຖະກິດຂອງເຂົາເຈົ້າ.

ຈ. ຮັບປະກັນໃຫ້ຂະບວນການຍົກຍ້າຍຈັດສັນ ຖືກຈັດຕັ້ງປະຕິບັດ ໂດຍການມີສ່ວນຮ່ວມຂອງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ອົງການຈັດຕັ້ງທາງດ້ານສັງຄົມ ແລະ ວັດທະນະທຳ ຂອງເຂົາເຈົ້າ ໃຫ້ສາມາດໄດ້ຮັບການຊ່ວຍເຫຼືອຫຼາຍ ເທົ່າທີ່ຈະເປັນໄປໄດ້.

## ໝວດທີ II
## ສິດຂອງຜູ້ທີ່ໄດ້ຮັບການທົດແທນຄ່າເສຍຫາຍ

### ມາດຕາ 5. ສິດຂອງຜູ້ທີ່ໄດ້ຮັບການທົດແທນຄ່າເສຍຫາຍ, ການຊ່ວຍເຫຼືອໃນການຍົກຍ້າຍຈັດສັນ ແລະ ການຟື້ນຟູຊີວິດການເປັນຢູ່.

1. ບຸກຄົນ, ນິຕິບຸກຄົນ ທີ່ດຳລົງຊີວິດ ຫຼື ທຳມາຫາກິນຢູ່ພື້ນທີ່ໃດໜຶ່ງໃນເຂດໂຄງການພັດທະນາ ທີ່ຈະມີການເວນຄືນ ກ່ອນວັນເລີ່ມຕຳນົໂຄງການ ຈະຖືວ່າ ເປັນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ມີສິດໄດ້ຮັບການທົດແທນຄ່າເສຍຫາຍ, ການຊ່ວຍເຫຼືອໃນການຍົກຍ້າຍຈັດສັນ ແລະການຟື້ນຟູຊີວິດການເປັນຢູ່ ຂອງເຂົາເຈົ້າ.

2. ປະຊາຊົນ ຜູ້ທີ່ບໍ່ໄດ້ດຳລົງຊີວິດຢູ່ໃນເຂດໂຄງການ, ແຕ່ມີທີ່ດິນ ແລະ ສິ່ງປຸກສ້າງຢູ່ໃນເຂດໂຄງການດັ່ງກ່າວ ກໍ່ມີສິດໄດ້ຮັບການທົດແທນຄ່າເສຍຫາຍ, ການຊ່ວຍເຫຼືອ ໃນການຍົກຍ້າຍຈັດສັນ ແລະ ການຟື້ນຟູຊີວິດການເປັນຢູ່ເຊັ່ນດຽວກັນ.

## ໝວດທີ III
## ການທົດແທນຄ່າເສຍຫາຍ

**ມາດຕາ 6. ຫຼັກການທົດແທນຄ່າເສຍຫາຍ**

1. ເຈົ້າຂອງໂຄງການ ຕ້ອງທົດແທນຄ່າເສຍຫາຍຕໍ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ຍ້ອນການສູນເສຍສິດນຳໃຊ້ທີ່ດິນ ຫຼື ການສູນເສຍຊັບສິນ(ສິ່ງກໍ່ສ້າງ, ພືນລະປູກ, ຕົ້ນໄມ້ ແລະຊັບຄົງທີ່ອື່ນໆ) ທີ່ຖືກເສຍຫາຍທັງໝົດ ຫຼື ສ່ວນໃດໜຶ່ງ ໃນມູນຄ່າປ່ຽນແທນ.

2. ໃນກໍລະນີ ທີ່ດິນສ່ວນໃດໜຶ່ງ ຫຼື ທັງໝົດ ໄດ້ຮັບຜົນກະທົບຈາກໂຄງການ, ໂດຍສະເພາະທີ່ດິນກະສິກຳ, ທີ່ດິນສຳລັບທີ່ຢູ່ອາໃສ ແລະ ທີ່ດິນສຳລັບການຄ້າ ເຈົ້າຂອງໂຄງການຕ້ອງໄດ້ທົດແທນຄ່າເສຍຫາຍ ໂດຍການທົດແທນຄືນດ້ວຍດິນ ຕາມຂະໜາດ, ຄວາມສາມາດນຳໃຊ້ເຂົ້າໃນການຜະລິດ ແລະ ເປັນທີ່ດິນ ທີ່ສາມາດຕົກລົງກັນໄດ້ ລະຫວ່າງ ຜູ້ໄດ້ຮັບຜົນກະທົບ ແລະ ເຈົ້າຂອງໂຄງການ.

3. ຖ້າວ່າເຮືອນ ຫຼື ສິ່ງປຸກສ້າງອື່ນໆ ສ່ວນໃດໜຶ່ງ ໄດ້ຮັບຜົນກະທົບຈາກໂຄງການ ແລະ ສ່ວນທີ່ຍັງເຫຼືອນັ້ນ ບໍ່ສາມາດນຳໃຊ້ຕໍ່ໄປໄດ້ ຫຼື ບໍ່ສາມາດປຸກເຮືອນໃນຂະໜາດມາດຕະຖານຕໍ່າສຸດໄດ້, ຜູ້ໄດ້ຮັບຜົນກະທົບ ມີສິດໄດ້ຮັບການທົດແທນຄ່າເສຍຫາຍທັງໝົດ ຕໍ່ເຮືອນ ຫຼື ສິ່ງປຸກສ້າງຕ່າງໆດັ່ງກ່າວ ດ້ວຍມູນຄ່າປ່ຽນແທນ ໂດຍບໍ່ມີການຄິດໄລ່ ຄ່າຫຼຸ້ຍຫ້ຽນ ຫຼື ຫຼຸດຄ່າທົດແທນ ຕາມວັດຖຸທີ່ຍັງເຫຼືອ. ໃນກໍລະນີ ທີ່ສິ່ງປຸກສ້າງສາມາດນຳໃຊ້ຕໍ່ໄປໄດ້, ເຈົ້າຂອງໂຄງການ ຕ້ອງທົດແທນຕໍ່ສ່ວນທີ່ສູນເສຍ ແລະ ໃຫ້ການຊ່ວຍເຫຼືອເປັນເງິນສົດ ຫຼື ເປັນວັດຖຸໃນການຟື້ນຟູບູລະນະ ສິ່ງປຸກສ້າງທີ່ຍັງເຫຼືອດັ່ງກ່າວນັ້ນ.

4. ຖ້າວ່າທີ່ດິນ ຫຼື ຊັບສິນບັດ ຫາກຖືກໂຄງການນຳໃຊ້ຊົ່ວຄາວ, ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການ ຕ້ອງໄດ້ຮັບການທົດແທນຄ່າເສຍຫາຍແບບເຕັມສ່ວນ ຕໍ່ການສູນເສຍລາຍຮັບ, ການສູນເສຍຊັບສິນ, ພືດ ແລະ ຕົ້ນໄມ້ ຕາມແຕ່ລະກໍລະນີ. ເຈົ້າຂອງໂຄງການຕ້ອງຮັບປະກັນວ່າ ທີ່ດິນ ຫຼື ຊັບສິນບັດດັ່ງກ່າວ ໄດ້ຖືກສົ່ງຄືນໃຫ້ແກ່ພວກເຂົາເຈົ້າ ໃນສະພາບກ່ອນເລີ່ມຕົ້ນໂຄງການ.

5. ຜູ້ທີ່ເຊົ່າເຮືອນ ຫຼື ສິ່ງປຸກສ້າງອື່ນໆ ທີ່ນຳໃຊ້ເພື່ອຈຸດປະສົງຕ່າງໆ ຊຶ່ງໄດ້ຮັບຜົນກະທົບຈາກໂຄງການ ຕ້ອງໄດ້ຮັບການທົດແທນຄ່າເສຍຫາຍເປັນມູນຄ່າ ເທົ່າກັບຄ່າເຊົ່າສາມເດືອນ ແລະ ໄດ້ຮັບການຊ່ວຍເຫຼືອໃນການຊອກຫາທີ່ຢູ່ໃໝ່.

6. ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ທີ່ອາໄສຢູ່ເຂດຊົນນະບົດ ຫຼື ເຂດຫ່າງໄກສອກຫຼີກ ທີ່ບໍ່ມີໃບຢັ້ງຢືນກຳມະສິດຄອບຄອງ ແລະ ນຳໃຊ້ທີ່ດິນ ຫຼື ເອກະສານທີ່ເປັນຫຼັກຖານ ຢັ້ງຢືນສິດໃນການນຳໃຊ້ທີ່ດິນ ຕໍ່ທີ່ດິນ ແລະ ຊັບສິນ ທີ່ເຂົາເຈົ້າຄຸ້ມຄອງນັ້ນ ຕ້ອງໄດ້ຮັບການທົດແທນຕໍ່ການສູນເສຍດັ່ງກ່າວ ດ້ວຍມູນຄ່າປ່ຽນແທນ ແລະ ການຊ່ວຍເຫຼືອເພີ່ມເຕີມເພື່ອຮັບປະກັນຊີວິດການເປັນຢູ່ຂອງເຂົາເຈົ້າບໍ່ໃຫ້ຫຼຸດລົງຈາກເດີມຍ້ອນໂຄງການ.

ສຳລັບປະຊາຊົນຢູ່ເຂດຕົວເມືອງຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ທີ່ບໍ່ມີໃບຢັ້ງຢືນກຳມະສິດຄອບຄອງ ແລະ ນຳໃຊ້ທີ່ດິນ ຫຼື ເອກະສານທີ່ເປັນຫຼັກຖານ ຢັ້ງຢືນສິດນຳໃຊ້ທີ່ດິນ ຕໍ່

ທີ່ດິນ ແລະຊັບສິນທີ່ເຂົາເຈົ້າຄຸ້ມຄອງນັ້ນ ແລະ ທັງເປັນຜູ້ທີ່ບໍ່ມີທີ່ດິນຢູ່ບ່ອນອື່ນ ຕ້ອງໄດ້ຮັບການທົດແທນຕໍ່ການສູນເສຍດັ່ງກ່າວ ດ້ວຍມູນຄ່າປ່ຽນແທນ ແລະ ການຊ່ວຍເຫຼືອເພີ່ມເຕີມ ເພື່ອຮັບປະກັນຊີວິດການເປັນຢູ່ຂອງເຂົາເຈົ້າບໍ່ໃຫ້ຫຼຸດລົງຈາກເດີມຍ້ອນໂຄງການ

7. ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ທີ່ບໍ່ມີບັນຫາກ່ຽວກັບການສູນເສຍສິດນຳໃຊ້ທີ່ດິນ ຈະໄດ້ຮັບການທົດແທນຄ່າເສຍຫາຍຕໍ່ຊັບສິນ (ສິ່ງປຸກສ້າງ, ເຄື່ອງປູກ, ຕຳນໄມ້) ໃນມູນຄ່າປ່ຽນແທນ ແລະ ການຊ່ວຍເຫຼືອອື່ນໆ ຢູ່ໃນໄລຍະຟື້ນຟູ ແລະ ການຊ່ວຍເຫຼືອຟື້ນຟູເສດຖະກິດ ເພື່ອໃຫ້ສະພາບຊີວິດການເປັນຢູ່ເຂົາເຈົ້າບໍ່ຫຼຸດລົງຈາກເດີມຍ້ອນໂຄງການ.

8. ການຮ້ອງຟ້ອງ, ຮ້ອງທຸກ ແລະ ບັນຫາທີ່ບໍ່ໄດ້ຮັບການແກ້ໄຂຂອງປະຊາຊົນ ກ່ຽວກັບທີ່ດິນ, ກຳມະສິດຄອບຄອງ ແລະ ນຳໃຊ້ທີ່ດິນ ແລະ ຊັບສິນອື່ນໆ ທີ່ເກີດຂຶ້ນກ່ອນໂຄງການ ຊຶ່ງໄດ້ຮັບຜົນກະທົບຈາກການເຄື່ອນໄຫວວຽກງານພາກສ່ວນໜຶ່ງຂອງໂຄງການ ຕ້ອງໄດ້ຖືກແກ້ໄຂກ່ອນການເລີ່ມຈັດຕັ້ງປະຕິບັດ ການເວນຄືນຊັບສິນດັ່ງກ່າວ.

9. ກ່ອນການທົດແທນຄ່າເສຍຫາຍ, ເຈົ້າຂອງໂຄງການ ຕ້ອງສ້າງຕັ້ງຄະນະກຳມະການຮ່ວມ, ຊຶ່ງມີຕົວແທນຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອຕີລາຄາຄວາມເສຍຫາຍ ຂອງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ.

10. ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ຕ້ອງໄດ້ຮັບການທົດແທນຄ່າເສຍຫາຍຢ່າງເຕັມສ່ວນ, ໄດ້ຮັບການຍົກຍ້າຍຈັດສັນ ແລະ ມີມາດຕະການ ຫຼື ວາງແຜນຟື້ນຟູຊີວິດການເປັນຢູ່ ກ່ອນການເລີ່ມຕົ້ນກໍ່ສ້າງໂຄງການ.

## ມາດຕາ 7. ການຊ່ວຍເຫຼືອຢູ່ໃນໄລຍະຍົກຍ້າຍຈັດສັນ ແລະໄລຍະຟື້ນຟູຊີວິດ ການເປັນຢູ່

ປະຊາຊົນຜູ້ທີ່ຖືກຍົກຍ້າຍ ຫຼື ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ດ້ວຍການສູນເສຍລາຍຮັບ ແລະ ສະພາບການດຳລົງຊີວິດຊຸດໂຊມ ຕ້ອງໄດ້ຮັບການຊ່ວຍເຫລືອ ຈົນກ່ວາລະດັບລາຍຮັບ ແລະ ເງື່ອນໄຂການດຳລົງຊີວິດຂອງເຂົາເຈົ້າໝັ້ນຄົງດັ່ງນີ້:

(ກ). ຄ່າໃຊ້ຈ່າຍໃນການຂົນສົ່ງ ຫຼື ການຊ່ວຍເຫຼືອເປັນວັດຖຸ ຕາມແຕ່ລະກໍລະນີ ເພື່ອຍົກຍ້າຍໄປຢູ່ສະຖານທີ່ໃໝ່ ຫຼືສະຖານທີ່ຕາມການຄັດເລືອກຂອງເຂົາເຈົ້າ.

(ຂ). ຄ່າສະບຽງອາຫານ ເປັນເງິນ ຫຼື ວັດຖຸ ແລະເງິນທົດແທນການສູນເສຍລາຍຮັບໃນໄລຍະຟື້ນຟູຊີວິດການເປັນຢູ່.

(ຄ). ໃຫ້ການຊ່ວຍເຫລືອ ໃນການພັດທະນາທີ່ເໝາະສົມ ຫຼັງຈາກການຍົກຍ້າຍຈັດສັນຢູ່ໃນໄລຍະຟື້ນຟູຊີວິດການເປັນຢູ່ ຈົນເຖິງໄລຍະເວລາທີ່ພວກເຂົາເຈົ້າ ສາມາດຟື້ນຟູລາຍຮັບ ຫຼື ຍົກລະດັບມາດຕະຖານການດຳລົງຊີວິດ ຈົນເຖິງລະດັບລາຍຮັບຄອບຄົວທີ່ມີພື້ນຖານໝັ້ນຄົງ.

## ມາດຕາ 8. ການຟື້ນຟູສະພາບເສດຖະກິດ

1. ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ຍ້ອນການສູນເສຍລາຍຮັບ ທີ່ເກີດຈາກຊັບສິນປະມານ 20% ຫຼື ຫລາຍກ່ວານັ້ນ (ສູນເສຍທີ່ດິນກະສິກຳ, ທີ່ດິນອຸດສາຫະກຳ ຫຼື ທີ່ດິນສຳລັບການຜະລິດ ແລະທຸລະກິດ), ວິທີການດຳລົງຊີວິດ, ວຽກເຮັດງານທຳ ຫຼື ທຸລະກິດ ແລະ ການເກືອດຫ້າມການເຂົ້າໄປນຳໃຊ້ ຊັບພະຍາກອນຂອງຊຸມຊົນ, ປະຊາຊົນເຫຼົ່ານັ້ນຕ້ອງມີສິດໄດ້ຮັບການຟື້ນຟູລາຍຮັບຂອງຕົນເພີ່ມເຕີມແບບມີລັກສະນະໝັ້ນຄົງ, ນອກຈາກການທົດ ແທນ ແລະ ການຊ່ວຍເຫລືອ ເພື່ອໃຫ້ເຂົາເຈົ້າ ສາມາດມີລະດັບການດຳລົງຊີວິດ ເທົ່າກັບໄລຍະກ່ອນໂຄງການເກີດຂຶ້ນດັ່ງກ່າວຂ້າງເທິງ.

2. ສຳລັບຜູ້ທີ່ຖືກຍົກຍ້າຍ ຊຶ່ງການດຳລົງຊີວິດຂອງເຂົາເຈົ້າຜ່ານມາ ແມ່ນອາໃສແຕ່ການນຳໃຊ້ທີ່ດິນ ທີ່ໄດ້ຮັບຜົນກະທົບຈາກໂຄງການນັ້ນ, ເຂົາເຈົ້າຕ້ອງໄດ້ຮັບການທົດແທນດ້ວຍທີ່ດິນເປັນຕຳ່ນຕໍ່, ຖ້າບໍ່ມີທີ່ດິນສະໜອງໃຫ້ພວກກ່ຽວ ຕ້ອງມີການສ້າງໂອກາດໃຫ້ມີວຽກເຮັດ ງານທຳ ຫຼື ການເຮັດວຽກທຸລະກິດແບບເປັນຂອງຕົນເອງ.

3. ສຳລັບຜູ້ທີ່ຖືກຍົກຍ້າຍ ຊຶ່ງທຸລະກິດຂອງເຂົາເຈົ້າ ໄດ້ຮັບຜົນກະທົບຈາກໂຄງການ, ນອກຈາກການທົດແທນຕໍ່ການສູນເສຍທີ່ດິນ, ສິ່ງປຸກສ້າງ, ລາຍຮັບ ແລະ ການຊ່ວຍເຫຼືອຕ່າງໆແລ້ວ ພວກເຂົາເຈົ້າຍັງຕ້ອງໄດ້ຮັບການຊ່ວຍເຫຼືອ ເພື່ອຊອກສະຖານທີ່ໃນການດຳເນີນທຸລະກິດຕາມຄວາມເໝາະສົມ.

4. ຕ້ອງໄດ້ເອົາໃຈໃສ່ ຕໍ່ມາດຕະການຟື້ນຟູຊີວິດການເປັນຢູ່ ສຳລັບກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ ໂດຍໃຫ້ການຊ່ວຍເຫຼືອທີ່ເໝາະສົມເພີ່ມເຕີມໃສ່ການທົດແທນຄ່າເສຍຫາຍ ຕໍ່ຊັບສິນທີ່ໄດ້ຮັບຜົນກະທົບ ແລະ ການຊ່ວຍເຫຼືອອື່ນໆແກ່ພວກເຂົາເຈົ້າ ແນໃສ່ເຮັດໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ສາມາດບັນລຸເປົ້າໝາຍໃນການສ້າງລາຍຮັບສູງກ່ວາລະດັບຄວາມທຸກຍາກ ທີ່ກຳນົດໄວ້.

**ມາດຕາ 9. ການຟື້ນຟູ ແລະ ການສ້ອມແປງ**

1. ເຈົ້າຂອງໂຄງການ ຕ້ອງຟື້ນຟູ ຫຼື ສ້ອມແປງສິ່ງອຳນວຍຄວາມສະດວກ ແລະສິ່ງກໍ່ສ້າງຕ່າງໆ ອັນເປັນຊັບສົມບັດລວມຂອງຊຸມຊົນ ທີ່ໄດ້ຮັບຄວາມເສຍຫາຍຈາກໂຄງການ ໂດຍບໍ່ໃຫ້ເກັບຄ່າໃຊ້ຈ່າຍຈາກຊຸມຊົນ.

2. ການເຂົ້າໄປນຳໃຊ້ຊັບພະຍາກອນ ທີ່ເປັນກຳມະສິດລວມໝູ່ ຊຶ່ງຢູ່ພາຍໃນການຄຸ້ມຄອງຂອງຊຸມຊົນ ທີ່ໄດ້ຮັບຜົນກະທົບຈາກໂຄງການ ຕ້ອງໄດ້ມີແຜນການຫຼຸດຜ່ອນຜົນກະທົບໃນດ້ານດັ່ງກ່າວ ໂດຍການຈັດສັນ ເພື່ອໃຫ້ເຂົາເຈົ້າສາມາດເຂົ້າໄປນຳໃຊ້ຊັບພະຍາກອນໄດ້ດີກ່ວາເກົ່າ ຫຼື ຢ່າງໜ້ອຍ ກໍ່ໃຫ້ເທົ່າກັນກັບສະພາບການນຳໃຊ້ຜ່ານມາຂອງເຂົາເຈົ້າແບບຕໍ່ເນື່ອງ. ຕ້ອງໄດ້ໃຫ້ຄວາມເອົາໃຈໃສ່ຕໍ່ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການໂດຍກົງ ຖ້າວ່າ ຜົນປະໂຫຍດຂອງເຂົາເຈົ້າ ໄດ້ຮັບຜົນກະທົບ ຍ້ອນບໍ່ສາມາດນຳໃຊ້ຊັບພະຍາກອນລວມດັ່ງກ່າວ.

**ມາດຕາ 10. ການພັດທະນາເຂດຍົກຍ້າຍຈັດສັນປະຊາຊົນ**

1. ປະຊາຊົນທີ່ຖືກຍົກຍ້າຍ ໄປຢູ່ສະຖານທີ່ແຫ່ງໃດໜຶ່ງແບບລວມກັນເປັນກຸ່ມ ຕ້ອງໄດ້ຮັບການທົດແທນເປັນເຮືອນຊານ ຫຼື ທົດແທນເປັນທີ່ດິນປຸກເຮືອນ ຕາມຄວາມເໝາະສົມ, ທີ່ດິນປຸກຮ້ານຄ້າ ໃນກໍລະນີທຸລະກິດໄດ້ຮັບຜົນກະທົບ, ທີ່ດິນກະສິກໍາ ໃນຂະໜາດເທົ່າກັນ ໂດຍໃຫ້ມີຄວາມສາມາດໃນການຜະລິດ ຫຼື ດໍາເນີນທຸລະກິດທີ່ດີກ່ວາ ຫລື ຢ່າງໜ້ອຍເທົ່າກັບສະຖານທີ່ເດີມ. ການປ່ຽນແທນທີ່ດິນ, ທີ່ດິນປຸກເຮືອນ ຫຼື ທີ່ຕັ້ງທາງດ້ານທຸລະກິດ ຕ້ອງໃຫ້ມີລັກສະນະໃກ້ຄຽງ ກັບທີ່ດິນທີ່ຖືກສູນເສຍ ແລະ ສາມາດຮັບເອົາໄດ້ ໂດຍຜູ້ທີ່ໄດ້ຮັບຜົນກະທົບ. ສະຖານທີ່ຍົກຍ້າຍຈັດສັນແບບເປັນກຸ່ມນັ້ນ ຕ້ອງມີການສ້າງລະບົບການສະໜອງນໍ້າໃຊ້, ສຸຂະນາໄມ, ຮ່ອງລະບາຍນໍ້າເປື້ອນ, ທາງຊອຍໃນບ້ານ, ເສັ້ນທາງເຊື່ອມຕໍ່ກັບທາງໃຫຍ່ ແລະ ການສະໜອງໄຟຟ້າ. ໃນເວລາມີຄວາມຈໍາເປັນ, ພວກເຂົາເຈົ້າອາດຈະໄດ້ຮັບການຊ່ວຍເຫຼືອໃນຮູບແບບອື່ນ ເຊັ່ນ ການປັບປຸງດ້ານສາທາລະນະສຸກ ແລະ ການສຶກສາຕື່ມອີກ.

2. ການປ່ຽນແທນທີ່ດິນກະສິກໍາ, ທີ່ຢູ່ອາໃສ ແລະ ທີ່ດິນສໍາລັບທຸລະກິດຂອງປະຊາຊົນ ຕ້ອງມີໃບຕາດິນ ແລະ ໃບຢັ້ງຢືນກໍາມະສິດທີ່ດິນ ໂດຍບໍ່ໄດ້ມີຄ່າໃຊ້ຈ່າຍເພີ່ມເຕີມນັບທັງການເສຍພາສີ-ອາກອນ ແລະ ຄ່າທໍານຽມຕ່າງໆ. ຕໍ່ ດິນສໍາລັບການກໍ່ສ້າງ ຕ້ອງຖືກຈັດສັນຕາມລະບຽບການ ແລະ ມາດຕະຖານ ໃນການອອກແບບຜັງເມືອງ.

3. ເຈົ້າຂອງໂຄງການ ຕ້ອງຮັບຜິດຊອບໃນການພັດທະນາເຂດຍົກຍ້າຍຈັດສັນປະຊາຊົນ ເພື່ອຫຼີກເວັ້ນ ຫຼື ຫຼຸດຜ່ອນຜົນກະທົບທາງລົບຕໍ່ສັງຄົມ ແລະ ສິ່ງແວດລ້ອມຕໍ່ເຂດໃກ້ຄຽງ.

4. ໃນເວລາມີການຍົກຍ້າຍຈັດສັນປະຊາຊົນ ໄປຢູ່ເປັນກຸ່ມໃນເຂດໃດໜຶ່ງ ເຈົ້າຂອງໂຄງການ ຕ້ອງໄດ້ມີວິທີການ ຫຼຸດຜ່ອນຜົນກະທົບທາງລົບຕໍ່ຊຸມຊົນທີ່ອາໃສຢູ່ທີ່ນັ້ນມາກ່ອນແລ້ວ ແລະ ຕ້ອງໄດ້ໃຫ້ການຊ່ວຍເຫຼືອທົດແທນຄ່າເສຍຫາຍ(ຖ້າຊັບສິນຂອງເຂົາເຈົ້າຖືກເສຍຫາຍ)ໃຫ້ແກ່ຊຸມຊົນ ທີ່ອາໃສຢູ່ກ່ອນ ຄ້າຍຄືກັນກັບຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ.

## ໝວດທີ IV
## ອົງປະກອບທີ່ສໍາຄັນ ຂອງການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນ

**ມາດຕາ 11. ວັດທະນາທໍາ ແລະ ການດໍາລົງຊີວິດຂອງປະຊາຊົນທ້ອງຖິ່ນ**

1. ເຈົ້າຂອງໂຄງການ ຕ້ອງເອົາໃຈໃສ່ ຕໍ່ຊັບສິນທາງດ້ານວັດທະນະທໍາ, ສາດສະໜາ, ຄວາມເຊື່ອຖື ແລະ ຮີດຄອງປະເພນີທີ່ປະຊາຊົນທ້ອງຖິ່ນປະຕິບັດຜ່ານມາໃນໄລຍະວາງແຜນ, ກໍ່ສ້າງ ແລະ ດໍາເນີນໂຄງການ.

2. ໃນກໍລະນີຊຸມຊົນ ຫຼື ບຸກຄົນໃດໜຶ່ງ ຕົກລົງປະກອບສ່ວນທີ່ດິນຂອງຕົນ ໃຫ້ແກ່ໂຄງການດ້ວຍຄວາມສະໝັກໃຈ ໂດຍບໍ່ມີການຮຽກຮ້ອງການທົດແທນຄ່າເສຍຫາຍ, ການປະກອບສ່ວນດັ່ງກ່າວ ສາມາດຮັບເອົາໄດ້ກໍຕໍ່ເມື່ອ ມີຜົນກະທົບຕໍ່ຊັບສິນຂອງເຂົາເຈົ້າໃນລະດັບໃດໜຶ່ງ (ມີຜົນກະທົບຫນ້ອຍກ່ວາ 20% ຕໍ່ຊັບສິນທີ່ສາມາດສ້າງລາຍຮັບ) ຫຼື ບໍ່ມີການຍົກຍ້າຍຈັດສັນ

ແລະ ຜົນກະທົບຕໍ່ລາຍຮັບ, ວຽກເຮັດງານທຳ ຫຼື ທຸລະກິດຂອງເຂົາເຈົ້າ. ຊຸມຊົນ ຫຼືບຸກຄົນທີ່ປະກອບສ່ວນດັ່ງກ່າວ ຕ້ອງໄດ້ໃຫ້ມີຄວາມເຂົ້າໃຈຢ່າງເຕັມສ່ວນ ຕໍ່ສິດຂອງເຂົາເຈົ້າ.

3. ເຈົ້າຂອງໂຄງການ ຕ້ອງກຳນົດມາດຕະການຫຼຸດຜ່ອນຜົນກະທົບ ແລະ ຜົນປະໂຫຍດທາງດ້ານສັງຄົມ ແລະ ເສດຖະກິດ ເພື່ອປັບປຸງຖານະຂອງຊຸມຊົນ ທີ່ເປັນຊົນເຜົ່າ ແລະ ຕ້ອງໃຫ້ສອດຄ່ອງກັບວັດທະນະທຳຂອງເຂົາເຈົ້າ ໂດຍຜ່ານການຕົກລົງໃນເວລາມີການປຶກສາຫາລືກັບ ປະຊາຊົນທີ່ໄດ້ຮັບຜົນກະທົບ ຈາກໂຄງການ.

### ມາດຕາ 12. ການມີສ່ວນຮ່ວມ ແລະ ການປຶກສາຫາລືກັບປະຊາຊົນ

1. ເຈົ້າຂອງໂຄງການ ຕ້ອງຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນແບບມີສ່ວນຮ່ວມ, ຮັບປະກັນໃຫ້ປະຊາຊົນ ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ, ອຳນາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຂໍ້ມູນ ແລະ ໄດ້ເຂົ້າຮ່ວມປຶກສາຫາລືຢ່າງເຕັມສ່ວນ, ໄດ້ມີການພິຈາລະນາ ທຸກບັນຫາຂອງເຂົາເຈົ້າຢູ່ທຸກຂັ້ນຕອນ ຂອງການພັດທະນາໂຄງການ, ໂດຍສະເພາະຢູ່ໃນໄລຍະວາງແຜນ ແລະ ຈັດຕັ້ງປະຕິບັດວຽກງານກ່ຽວກັບການເວນຄືນ, ການປະເມີນມູນຄ່າທີ່ດິນ ແລະ ຂະບວນການຍົກຍ້າຍຈັດສັນ.

2. ເຈົ້າຂອງໂຄງການ ຕ້ອງໄດ້ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບຈຸດປະສົງຂອງໂຄງການ, ຮູບແບບການທົດແທນຄ່າເສຍຫາຍ ແລະອື່ນໆ ທີ່ເກີດຈາກໂຄງການ ຊຶ່ງຖືເປັນພາກສ່ວນໜຶ່ງ ຂອງຂະບວນການຍົກຍ້າຍຈັດສັນ ໂດຍຜ່ານສື່ສານມວນຊົນ ເຊັ່ນ ໜັງສືພິມ, ວິທະຍຸ, ໂທລະພາບ, ການຈັດປະຊຸມກັບປະຊາຊົນ ແລະ ວິທີການອື່ນໆ ເພື່ອແຈ້ງໃຫ້ແກ່ອົງການປົກຄອງທ້ອງຖິ່ນ ຢູ່ຂັ້ນແຂວງ, ເມືອງ, ບ້ານ ແລະ ອົງການຈັດຕັ້ງມະຫາຊົນ ພ້ອມທັງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ຜູ້ທີ່ກ່ຽວຂ້ອງຊາບຕາມຄວາມຈຳເປັນ.

### ມາດຕາ 13. ການແກ້ໄຂຂໍ້ຂັດແຍ່ງ

1. ເຈົ້າຂອງໂຄງການ ຕ້ອງສ້າງຕັ້ງກົນໄກທີ່ມີປະສິດທິຜົນ ໃນການຮັບຟັງ ແລະ ແກ້ໄຂຂໍ້ຂັດແຍ່ງ ຢູ່ໃນໄລຍະວາງແຜນ ແລະ ຈັດຕັ້ງປະຕິບັດວຽກງານຍົກຍ້າຍຈັດສັນປະຊາຊົນຂອງໂຄງການ.

2. ເຈົ້າຂອງໂຄງການຕ້ອງໄດ້ປຶກສາຫາລືກັບ ອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງຂອງລັດຖະບານ ໃນການສ້າງຕັ້ງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ ຫຼື ຄະນະໄກ່ເກ່ຍ ເພື່ອແກ້ໄຂຄຳຮ້ອງຟ້ອງ, ຄຳຮ້ອງທຸກ ແລະຂໍ້ຂັດແຍ່ງ ກ່ຽວກັບການເວນຄືນທີ່ດິນ, ການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ.

3. ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບໂຄງການ ຫຼື ວຽກງານໃດໜຶ່ງຂອງໂຄງການ ຕ້ອງດຳເນີນການ ບົນພື້ນຖານການປຶກສາຫາລື ແລະ ວິທີການທີ່ໂປ່ງໃສ ແນໃສ່ຕົກລົງແກ້ໄຂບັນຫາ ດ້ວຍການເຫັນດີເຫັນພ້ອມນຳກັນ ຢູ່ໃນລະດັບໂຄງການ ກ່ອນທີ່ຈະສົ່ງຄຳຮ້ອງຟ້ອງ ຫຼື ຄຳຮ້ອງທຸກດັ່ງກ່າວ ໃຫ້ແກ່ອົງການປົກຄອງຂັ້ນຖັດໄປ ຫຼື ປະຕິບັດຕາມຂະບວນການຂອງສານປະຊາຊົນ. ອົງການຮັບຜິດຊອບໂຄງການ ຕ້ອງໄດ້ສ້າງເອກະສານບັນທຶກ ຄຳຮ້ອງຟ້ອງທີ່

ຕົນໄດ້ຮັບ ເປັນລາຍລັກອັກສອນ (ຫຼື ຂຽນໄວ້ໃນເວລາໄດ້ຮັບຄຳຮ້ອງຟ້ອງທາງປາກເປົ່າ) ຈາກປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການ.

4. ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ຈະໄດ້ຮັບການຍົກເວັ້ນ ຈາກການເສຍຄ່າທຳນຽມດ້ານບໍລິຫານ ຫຼື ດ້ານກົດໝາຍ ຢູ່ໃນຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງ. ໃນກໍລະນີຂໍ້ຂັດແຍ່ງດັ່ງກ່າວ ຖືກສົ່ງໄປສານປະຊາຊົນ, ຄ່າໃຊ້ຈ່າຍທັງໝົດທີ່ເກີດຂຶ້ນ ຈາກການດຳເນີນຄະດີຢູ່ສານ ຕ້ອງຕົກເປັນຄວາມຮັບຜິດຊອບຂອງໂຄງການ.

### ມາດຕາ 14. ຄ່າໃຊ້ຈ່າຍ ແລະ ງົບປະມານຂອງໂຄງການ

1. ເຈົ້າຂອງໂຄງການ ຕ້ອງປະຕິບັດຕາມແຜນການຍົກຍ້າຍຈັດສັນ ທີ່ມີການຄິດໄລ່ຄ່າທົດແທນຄ່າເສຍຫາຍ ແລະ ການຊ່ວຍເຫຼືອລະອຽດ ໃນການຍົກຍ້າຍຈັດສັນ ແລະ ຕັ້ງຖິ່ນຖານຂອງປະຊາຊົນ ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ. ໃນການຄິດໄລ່ດັ່ງກ່າວ ຕ້ອງໄດ້ມີການແຍກປະເພດ ຜູ້ໄດ້ຮັບຜົນກະທົບ ຈາກໂຄງການ ຕາມປະເພດ ແລະ ລະດັບຂອງຜົນກະທົບ. ການຄິດໄລ່ຄ່າໃຊ້ຈ່າຍ ຕ້ອງລວມທັງຄ່າໃຊ້ຈ່າຍ ໃນການຕິດຕາມກວດກາ, ຕີລາຄາ, ຄຸ້ມຄອງ ແລະ ບໍລິຫານ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ຕິດພັນກັບຜົນກະທົບຂອງໂຄງການ, ພ້ອມທັງຂຶ້ນເງິນແຮສຸກເສີນ ໄວ້ຢ່າງເໝາະສົມ.

2. ຄ່າໃຊ້ຈ່າຍທັງຫມົດ ຂອງແຜນງານຍົກຍ້າຍຈັດສັນ ຕ້ອງລວມເຂົ້າຢູ່ໃນມູນຄ່າຂອງໂຄງການ. ໃນກໍລະນີມູນຄ່າດັ່ງກ່າວ ສູງກ່ວາທີ່ກຳນົດໄວ້ ຍ້ອນມີເຫດການທີ່ບໍ່ສາມາດຄາດຄະເນໄດ້ເກີດຂຶ້ນ ຫຼື ຍ້ອນຄວາມຊັກຊ້າແກ່ຍາວ, ເຈົ້າຂອງໂຄງການ ຕ້ອງໄດ້ຈັດສັນທຶນຮອນເພີ່ມເຕີມຕາມຄວາມຈຳເປັນ.

### ມາດຕາ 15. ການປະກອບເອກະສານ ແລະ ການລາຍງານ

1. ເຈົ້າຂອງໂຄງການ ຕ້ອງປະກອບເອກະສານ ແລະ ລາຍງານໃຫ້ແກ່ອົງການຈັດຕັ້ງທີ່ຮັບຜິດຊອບຄຸ້ມຄອງໂຄງການຂອງລັດຖະບານ ເພື່ອພິຈາລະນາ. ບົດລາຍງານ ແລະ ເອກະສານດັ່ງກ່າວ ຕ້ອງໄດ້ອະທິບາຍລັກສະນະຂອງໂຄງການ ລະອຽດດັ່ງນີ້:

(ກ) ຊື່ເຈົ້າຂອງໂຄງການ.

(ຂ) ປະເພດໂຄງການ.

(ຄ) ຂະໜາດ ແລະ ທີ່ຕັ້ງຂອງໂຄງການ.

(ງ) ຈຸດປະສົງໂຄງການ.

(ຈ) ຈຳນວນ ແລະ ແຫຼ່ງແຮງງານ ທີ່ຈະນຳໃຊ້ເຂົ້າໃນການກໍ່ສ້າງ ແລະ ດຳເນີນໂຄງການ

(ສ) ການຄາດຄະເນຈຳນວນປະຊາຊົນ ທີ່ຈະໄດ້ຮັບຜົນກະທົບຈາກໂຄງການ ແລະ ປະເພດຜົນກະທົບ.

(ຊ) ການຄາດຄະເນຜົນໄດ້ ແລະ ຜົນເສຍທາງດ້ານສັງຄົມຂອງໂຄງການ.

(ຍ) ມາດຕະການຫຼຸດຜ່ອນຜົນກະທົບ

2. ເຈົ້າຂອງໂຄງການຕ້ອງປະຕິບັດຕາມຄຳແນະນຳຂອງອົງການຈັດຕັ້ງທີ່ຮັບຜິດຊອບຂອງລັດຖະບານ ຫຼັງຈາກອົງການດັ່ງກ່າວໄດ້ກວດກາເອກະສານ ແລະບົດລາຍງານເບື້ອງຕົ້ນ ແລະຖ້າເຫັນວ່າໂຄງການຈະສ້າງຜົນກະທົບທາງລົບຕໍ່ສັງຄົມ ເຈົ້າຂອງໂຄງການຕ້ອງດຳເນີນການສຶກສາ ແລະ ເຮັດການສຳຫຼວດພາກສະໜາມທີ່ຈຳເປັນ ລວມທັງການສຳຫຼວດພົນລະເມືອງ ຂຶ້ນບັນຊີ ຊັບສິນທີ່ຈະໄດ້ຮັບຜົນກະທົບ ແລະຖືກເສຍຫາຍ, ການສຳຫຼວດເກັບກຳຂໍ້ມູນ ພື້ນຖານດ້ານເສດຖະກິດສັງຄົມ ແລະ ກະກຽມບົດລາຍງານ ແລະ ເອກະສານກ່ຽວກັບຜົນກະທົບທາງດ້ານສັງຄົມ ແລະ ສົ່ງເອກະສານດັ່ງກ່າວ ໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດຖະບານ ພິຈາລະນາຮັບຮອງເອົາ, ຊຶ່ງເອກະສານຕ່າງໆດັ່ງກ່າວປະກອບດ້ວຍ:

(ກ) ການສຶກສາຜົນກະທົບຕໍ່ສັງຄົມເບື້ອງຕົ້ນ/ ການປະເມີນການເວນຄືນທີ່ດິນ ແລະ ຊັບສິນ ທີ່ຖືກເສຍຫາຍ.

(ຂ) ການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ.

(ຄ) ບົດລາຍງານການເວນຄືນທີ່ດິນ ແລະ ການທົດແທນຄ່າເສຍຫາຍ

(ງ) ແຜນການຍົກຍ້າຍຈັດສັນປະຊາຊົນ.

(ຈ) ແຜນພັດທະນາຊົນເຜົ່າ.

3. ຂະບວນການ ແລະ ວິທີດຳເນີນງານ ກ່ຽວກັບການສຶກສາຜົນກະທົບຕໍ່ສັງຄົມແບບລະອຽດ ຈະໄດ້ກຳນົດໄວ້ໃນຂໍ້ຕົກລົງ ຫຼື ຄຳແນະນຳ ກ່ຽວກັບການທົດແທນຄ່າເສຍຫາຍ ແລະການຍົກຍ້າຍ ຈັດສັນປະຊາຊົນ.

4. ເຈົ້າຂອງໂຄງການຕ້ອງສົ່ງບົດລາຍງານ ແລະ ເອກະສານຕ່າງໆ ດັ່ງນີ້:

(ກ) ໃນກໍລະນີ ໂຄງການເປັນໂຄງການຂອງລັດ, ເຈົ້າຂອງໂຄງການຕ້ອງສະເໜີເອກະສານ ໃຫ້ອົງການວິທະຍາສາດ ເຕັກໂນໂລຊີ ແລະສິ່ງແວດລ້ອມ ເປັນຜູ້ຄົ້ນຄວ້າ ແລະ ພິຈາລະນາຮັບຮອງເອົາ.

(ຂ) ໃນເວລາໂຄງການ ເປັນໂຄງການລົງທຶນພາຍໃນ ຫຼື ຕ່າງປະເທດ ຊຶ່ງເຈົ້າຂອງໂຄງການ ເປັນທຸລະກິດເອກະຊົນ ຫຼື ເປັນການຮ່ວມທຸລະກິດ ລະຫວ່າງລັດຖະບານ ແລະ ພາກເອກະຊົນ, ກ່ອນອື່ນເອກະສານຕ້ອງໄດ້ຖືກສົ່ງໃຫ້ແກ່ອົງການຮັບຜິດຊອບຄຸ້ມຄອງໂຄງການ ແລະ ອຳນາດການປົກຄອງທ້ອງຖິ່ນ, ຫຼັງຈາກນັ້ນ ອົງການຮັບຜິດຊອບຄຸ້ມຄອງໂຄງການ ຈະສົ່ງເອກະສານໃຫ້ແກ່ອົງການວິທະຍາສາດ ເຕັກໂນໂລຊີ ແລະສິ່ງແວດລ້ອມ ສຶກສາຄົ້ນຄ້ວາ ແລະພິຈາລະນາຮັບຮອງເອົາເປັນຂັ້ນສຸດທ້າຍ.

## ມາດຕາ 16. ການຕິດຕາມກວດກາ

1. ເຈົ້າຂອງໂຄງການ ຕ້ອງມີການຕິດຕາມກວດກາການຈັດຕັ້ງປະຕິບັດ ມາດຕະການ ທົດແທນຄ່າເສຍຫາຍ, ການຍົກຍ້າຍຈັດສັນ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ.

2. ໃນກໍລະນີໂຄງການ ທີ່ມີການຍົກຍ້າຍຈັດສັນປະຊາຊົນຂະໜາດໃຫຍ່ ແລະ ມີຜົນກະທົບທີ່ຮ້າຍແຮງ, ເຈົ້າຂອງໂຄງການຕ້ອງເຮັດສັນຍາວ່າຈ້າງ ອົງການກວດກາທີ່ມີບົດຮຽນ ແລະ ເປັນເອກະລາດ ມາດຳເນີນການຕິດຕາມກວດກາ, ຕີລາຄາການຍົກຍ້າຍຈັດສັນ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ.

3. ເຈົ້າຂອງໂຄງການ ຕ້ອງໄດ້ເຮັດການປະເມີນຜົນໃນໄລຍະເວລາ ຫົກເດືອນ ຫາ ໜຶ່ງປີ ຫຼັງຈາກສິ້ນສຸດການຈັດຕັ້ງປະຕິບັດ ມາດຕະການຍົກຍ້າຍຈັດສັນ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ເພື່ອກວດກາຄືນຜົນສຳເລັດທີ່ໄດ້ຮັບຈາກການຟື້ນຟູເສດຖະກິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນດັ່ງກ່າວຕາມເປົ້າໝາຍທີ່ໄດ້ກຳນົດໄວ້ໃນແຜນການຍົກຍ້າຍຈັດສັນປະຊາຊົນ.

4. ໃນກໍລະນີ ການປະເມີນຜົນດັ່ງກ່າວ ຊີ້ໃຫ້ເຫັນວ່າປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ບໍ່ສາມາດໄດ້ຮັບການຊ່ວຍເຫຼືອຕາມຈຸດປະສົງ ແລະ ເປົ້າໝາຍຂອງການສ້າງລາຍຮັບທີ່ໄດ້ກຳນົດໄວ້, ເຈົ້າຂອງໂຄງການຕ້ອງໄດ້ໃຫ້ການຊ່ວຍເຫຼືອເພີ່ມເຕີມ ເພື່ອໃຫ້ເຂົາເຈົ້າສາມາດບັນລຸ ຕາມຈຸດປະສົງ ແລະເປົ້າໝາຍດັ່ງກ່າວ.

## ໝວດທີ V
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 17. ການປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ບັນດາກະຊວງ ແລະ ອົງການທີ່ກ່ຽວຂ້ອງມີສິດ ແລະ ໜ້າທີ່ໃນການພິຈາລະນານະໂຍບາຍຍ້ອງຍໍ ໃຫ້ແກ່ຜູ້ທີ່ມີຜົນງານໃນການຈັດຕັ້ງປະຕິບັດວຽກງານ ໃນການຍົກຍ້າຍຈັດສັນປະຊາຊົນ, ການທົດແທນຄ່າເສຍຫາຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ແລະ ນຳໃຊ້ມາດຕະການດ້ວຍການກ່າວເຕືອນ, ປັບໃໝ ຫຼື ລົງໂທດ ຕໍ່ຜູ້ບໍ່ປະຕິບັດຕາມດຳລັດສະບັບນີ້ ແລະ ລະບຽບການ, ກົດໝາຍ ທີ່ກ່ຽວຂ້ອງ.

## ໝວດທີ VI
## ບັນຍັດສຸດທ້າຍ

### ມາດຕາ 18. ການຈັດຕັ້ງປະຕິບັດ

1. ບັນດາກະຊວງ, ອົງການທຽບເທົ່າທີ່ກ່ຽວຂ້ອງ ແລະ ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມີໜ້າທີ່ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການຈັດຕັ້ງປະຕິບັດດຳລັດສະບັບນີ້.

2. ບັນດາກະຊວງ, ອົງການທຽບເທົ່າ ແລະ ອຳນາດການປົກຄອງທ້ອງຖິ່ນທີ່ມີໜ້າທີ່ຮັບຜິດຊອບ ຄຸ້ມຄອງໂຄງການພັດທະນາ ຕ້ອງຮັບຮູ້ ແລະ ປະຕິບັດຕາມພາລະບົດບາດຂອງຕົນ ຢ່າງເຂັ້ມງວດ.

3. ມອບໃຫ້ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ເປັນຜູ້ແນະນຳ ແລະ ປະສານສົມທົບກັບບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ

**ມາດຕາ 19. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີແຫ່ງ ສປປ ລາວ